ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0382 /ທລຍ

# ບົດສະຫຼຸບປະຈຳເດືອນ ກຸມພາ 2016
# ແລະ ແຜນວຽກເດືອນ ມີນາ 2016

ບົດລາຍງານສະບັບນີ້ ແມ່ນການສັງລວມຜົນການຈັດຕັ້ງປະຕິບັດວຽກງານ ທລຍ ໃນເດືອນ ກຸມພາ 2016 ທີ່ຜ່ານມາ ເຊິ່ງວຽກງານທີ່ພົ້ນເດັ່ນແມ່ນສາມາດສະຫຼຸບໄດ້ດັ່ງນີ້:

ການນຳສະເໜີຜົນໄດ້ຮັບໃນຂັ້ນຕົ້ນຈາກການເຮັດປະເມີນຜົນກະທົບໄລຍະທ້າຍ (Endline) ຂອງໂຄງການ ທລຍ ໄລຍະທີ 2 ໂດຍຜູ້ໃຫ້ທຶນ ແມ່ນໄດ້ຈັດຂຶ້ນໃນວັນທີ 5 ກຸມພາ ປີ 2016 ທີ່ຫ້ອງການທະນາຄານໂລກ. ເຊິ່ງມີຜູ້ຕາງໜ້າຈາກອົງການຜູ້ໃຫ້ທຶນ ແລະ ອົງການທີ່ກ່ຽວຂ້ອງ ຄື: ທະນາຄານໂລກ, ສະວິດເຊີແລນ ແລະ ອິດສະຕາລີ ພ້ອມນັ້ນກໍຍັງມີພະນັກງານ ທລຍ ແລະ ບັນດາບໍລິສັດທີ່ປຶກສາຈາກຂ້າງນອກກໍໄດ້ໃຫ້ກຽດເຂົ້າຮ່ວມ ຈຳນວນທັງໝົດ 20 ຄົນ ເປັນ ຍິງ 8 ຄົນ. ສຳລັບ ພື້ນທີ່ຂອງການສຶກສາແມ່ນໄດ້ອີງໃສ່ບ່ອນດຽວກັນກັບການເຮັດປະເມີນໄລຍະຕົ້ນ (Baseline)ໃນປີ 2012 ທີ່ໄດ້ຈັດຂຶ້ນຢູ່ 4 ແຂວງ, ປະກອບມີ 11 ເມືອງ ຄື: ເມືອງສະໜາມໄຊ ແລະ ເມືອງ ຊານໄຊ ແຂວງອັດຕະປື, ເມືອງໃໝ່ ແລະ ເມືອງສຳພັນ ແຂວງຜົ້ງສາລີ, ເມືອງງາ, ເມືອງຮຸນ ແລະ ເມືອງແບ່ງ ແຂວງອຸດົມໄຊ; ເມືອງນ້ຳບາກ, ເມືອງປາກແຊງ, ເມືອງໂພນໄຊ ແລະ ເມືອງວຽງຄຳ ແຂວງຫລວງພະບາງ ປະກອບມີ 22 ກຸ່ມທີ່ ທລຍ ໃຫ້ການຊ່ວຍເຫລືອ ແລະ 22 ກຸ່ມທີ່ ທລຍ ບໍ່ໄດ້ໃຫ້ການຊ່ວຍເຫລືອ. ຈຸດປະສົງຫລັກຂອງການປະເມີນແມ່ນ (1) ເພື່ອສົມທຽບຜົນໄດ້ຮັບລະຫວ່າງໄລຍະຕົ້ນ (Baseline) ປີ 2012 ແລະໄລຍະທ້າຍ (Endline) ໂຄງການ ປີ 2015 ແລະ (2) ສົມທຽບຜົນໄດ້ຮັບລະຫວ່າງພື້ນທີ່ທີ່ບໍ່ໄດ້ຮັບການຊ່ວຍເຫຼືອ ແລະ ພື້ນທີ່ທີ່ໄດ້ຮັບການຊ່ວຍເຫຼືອ ຈາກ ທລຍ ມີ 22 ກຸ່ມຕາມເອກສານຕິດຄັດມາພ້ອມ. ຜົນການສຶກສາຄັ້ງນີ້ແມ່ນໄດ້ນຳສະເໜີໂດຍຜູ້ຊີ້ນຳການ ປະເມີນຈາກທະນາຄານໂລກ 2 ທ່ານ ຄື: ທ່ານ ນາງ ຊູຊານ ວອງ (Susan Wong) ແລະ ທ່ານ ຈອນ ວອສ (John Voss). ຜົນໄດ້ຮັບຈາກການປະເມີນຄັ້ງນີ້ໄດ້ຊີ້ໃຫ້ເຫັນວ່າໂດຍລວມແລ້ວ ພື້ນທີ່ທີ່ ທລຍ ໄດ້ໃຫ້ການຊ່ວຍເຫຼືອ ແມ່ນມີລະດັບການພັດທະນາ ຫຼື ຊີວິດການເປັນຢູ່ດີກວ່າບ່ອນທີ່ ທລຍ ບໍ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ການຈັດຕັ້ງປະຕິບັດວຽກງານ ທລຍ ທຽບໃສ່ການປະເມີນໄລຍະຕົ້ນແມ່ນເຫັນວ່າ ສາມາດເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນແມ່ນດີຂຶ້ນ (ລາຍລະອຽດແມ່ນຢູ່ໃນບົດປະເມີນສະບັບສຸດທ້າຍທີ່ຜູ້ໃຫ້ທຶນກຳລັງກະກຽມທີ່ຄາດວ່າຈະສຳເລັດໃນມື້ໆນີ້).

ຄືກັນກັບທີ່ໄດ້ລາຍງານໃນເດືອນຜ່ານມາ ວຽກງານທີ່ພົ້ນເດັ່ນຂອງ ທລຍ ແມ່ນ ການສັງລວມຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3. ສິ່ງທ້າທາຍອັນໜຶ່ງຂອງ ທລຍ ໃນໄລຍະນີ້ແມ່ນການເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການ ທລຍ 2 ໃຫ້ສຳເລັດຢ່າງສົມບູນແບບ ແລະ ທລຍ ໄລຍະທີ 3 ຄາດວ່າຈະເລີ່ມຕົ້ນໃນເດືອນຕຸລາ 2016 ນີ້. ສຳລັບຮອບວຽນ 13 ປະກອບມີ 458[1] ໂຄງການ ແລະ ຄາດວ່າຈະໃຊ້ງົບປະມານ12.2[2] ລ້ານ ໂດລາສະຫະລັດ ປະຈຸບັນແມ່ນຢູ່ໃນຂັ້ນຕອນຂໍອະນຸມັດຈາກຜູ້ໃຫ້ທຶນ ແລະ ບາງແຂວງແມ່ນກະກຽມການຈັດຊື້-ຈັດຈ້າງ. ສຳລັບຈຳນວນ 52 ໂຄງການ ໃນງົບປະມານ 16 ຕື້ກີບ ແມ່ນໄດ້ສຳເລັດການຈັດຊື້-ຈັດຈ້າງ ແລະ ສ່ວນໃຫຍ່ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດແລ້ວ. ເພື່ອຮັບປະກັນທາງດ້ານຄຸນນະພາບ ແລະ ຄວາມໂປ່ງໃສແມ່ນໄດ້ມີການກະກຽມເພື່ອລົງຕິດຕາມ ແລະ ກວດກາໂຄງການພາຍໃຕ້ທຶນລັດຖະບານຮອບວຽນ 12 ແລະ 13 ຮ່ວມກັບຂະແໜງການທີ່ກ່ຽວຂ້ອງຈາກແຕ່ລະກະຊວງ ໃນລະຫວ່າງເດືອນມີນາ ແລະ ເມສາ 2016 ນີ້.

ສຳລັບ ທລຍ 3 ຕາມຕົວເລກທີ່ຜູ້ໃຫ້ທຶນສະເໜີມາແລ້ວ ແມ່ນຈະໄດ້ທຶນຈາກສາກົນຈຳນວນ 45 ລ້ານໂດລາສະຫະລັດ (30 ລ້ານ ຈາກທະນາຄານໂລກ ແລະ 15 ລ້ານຈາກສະວິດເຊີແລນ). ເພື່ອຮັບປະກັນ ການຄວບ ຄຸມດ້ານເນື້ອທີ່ ແລະ ກິດຈະກຳ, ມີຄວາມຈຳເປັນທີ່ລັດຖະບານຕ້ອງໄດ້ມີທຶນສົມທົບ ເປັນຢ່າງນ້ອຍ 10 ລ້ານໂດລາ ຄືກັບການຈັດຕັ້ງປະຕິບັດວຽກງານ ທລຍ 2. ສຳລັບຂອບເຂດຂອງການຈັດຕັ້ງປະຕິບັດ ແມ່ນກຳລັງກະກຽມໂດຍຈະອີງໃສ່ລະດັບຄວາມທຸກຍາກຂອງແຕ່ລະເມືອງ ແລະ ກຸ່ມບ້ານຕາມຄວາມເໝາະສົມທີ່ສຸດ. ສ່ວນປະເພດກິດຈະກຳແມ່ນຈະສືບຕໍ່ດ້ານພື້ນຖານໂຄງລ່າງຕາມຮູບແບບການມີສ່ວນຮ່ວມ ແລະ ຮັບປະກັນຄວາມຍືນຍົງຂອງໂຄງການ ໄປຄຽງຄູ່ວຽກງານປັບປຸງຊີວິດການເປັນຢູ່ ເຊື່ອສານໂພຊະນາການ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *ຮອບວຽນ 12 (ສົກປີ 2014-2015)*

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 412 ໂຄງການເທົ່າກັບ 94%, ຄວາມຄືບໜ້າຫລາຍກວ່າ 50% ມີ 20 ໂຄງການ, ໜ້ອຍກວ່າ 50% ມີ 5 ໂຄງການ ສ່ວນທີ່ເຫລືອ 1 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

[1] ແມ່ນຕົວເລກວາງແຜນຂັ້ນເມືອງ ອາດຈະມີການປ່ຽນແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

[2] ງົບປະມານອາດຈະມີການປ່ຽນແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 57 | 1 | 0 | 1 |
| ສາລະວັນ | 31 | 22 | 9 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ຜົ້ງສາລີ | 25 | 22 | 1 | 2 | 0 |
| ຫລວງນ້ຳທາ | 21 | 21 | 0 | 0 | 0 |
| ຫົວພັນ | 124 | 124 | 0 | 0 | 0 |
| ຫຼວງພະບາງ | 48 | 43 | 4 | 1 | 0 |
| ອຸດົມໄຊ | 50 | 47 | 2 | 1 | 0 |
| ອັດຕະປື | 18 | 17 | 0 | 1 | 0 |
| ເຊກອງ | 20 | 17 | 3 | 0 | 0 |
| ລວມ | **438** | **412** | **20** | **5** | **1** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 29 ກຸມພາ 2016*

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 39 | 1 | 1 | 0 |
| ຄົມມະນາຄົມ | 75 | 72 | 3 | 0 | 0 |
| ສາທາລະນະສຸກ | 25 | 24 | 1 | 0 | 0 |
| ສຶກສາ | 165 | 151 | 10 | 4 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 130 | 125 | 5 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 2 | 1 | 0 | 0 | 1 |
| ລວມ | **438** | **412** | **20** | **5** | **1** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 29 ກຸມພາ 2016*

ຕາຕະລາງ 3. ທຶນສົມທົບລັດຖະບານຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 15 | 15 | 0 | 0 | 0 |
| ສາລະວັນ | 12 | 8 | 4 | 0 | 0 |
| ຊຽງຂວາງ | 13 | 13 | 0 | 0 | 0 |
| ຫົວພັນ | 21 | 21 | 0 | 0 | 0 |
| ອັດຕະປື | 10 | 9 | 0 | 1 | 0 |
| ເຊກອງ | 3 | 3 | 0 | 0 | 0 |
| ລວມ | **74** | **69** | **4** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 29 ກຸມພາ 2016*

ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 15 | 15 | 0 | 0 | 0 |
| ຄົມມະນາຄົມ | 12 | 8 | 4 | 0 | 0 |
| ສາທາລະນະສຸກ | 13 | 13 | 0 | 0 | 0 |
| ສຶກສາ | 21 | 21 | 0 | 0 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 10 | 9 | 0 | 1 | 0 |
| ພະລັງງານ ແລະ ບໍ່ແຮ່ | 3 | 3 | 0 | 0 | 0 |
| ລວມ | **74** | **69** | **4** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 29 ກຸມພາ 2016*

## 1.2. ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກັນຍາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 329 ໂຄງການ (99%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ຈຳນວນທີ່ຍັງເຫຼືອ 4 ໂຄງການ ທັງໝົດແມ່ນມີຄວາມຄືບໜ້າຫລາຍກວ່າ 50% ຄາດວ່າຈະສຳເລັດໃນມໍ່ໆ ນີ້.

ຈາກຕາຕະລາງຂ້າງລຸ່ມນີ້ 4 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 5. ໂຄງການທີ່ຫຼ້າຊ້າໃນຮອບວຽນ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສໍາພັນ | ຄໍາວົງສາ | 80 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູຍາງ | 90 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ນາແລ | ພູຫຼວງ | ພູຫຼວງມົກຈິງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ລອງ | ບວກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 29 ກຸມພາ 2016*

ສາຍເຫດຂອງການລ່າຊ້າສ່ວນໃຫຍ່ເກີດຈາກຂັ້ນຕອນການຈັດຕັ້ງປະຕິບັດຂອງຜູ້ຮັບເໝົາ ເນື່ອງຈາກພື້ນທີ່ສ່ວນໃຫຍ່ຢູ່ຫ່າງໄກຊອກຫຼີກ ເຮັດໃຫ້ການສົ່ງວັດສະດຸຫຼ້າຊ້າ ແລະ ບາງໂຄງການແມ່ນມີຄວາມຈໍາເປັນທີ່ຈະຕ້ອງນໍາເຂົ້າວັດສະດຸຈາກຕ່າງປະເທດເຮັດໃຫ້ເກີດຄວາມຊັກຊ້າ ເຮັດໃຫ້ເກີດຄວາມຊັກຊ້າເນື່ອງຈາກຈະຕ້ອງໄດ້ກວດວັດສະດຸຢ່າງເຂັ້ມງວດກ່ອນນໍາເຂົ້າ.

## 2. <u>ງົບປະມານ ແລະ ການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2</u>

ສໍາລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ມັງກອນ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,093,371,331 ກີບ ເທົ່າກັບ 99.9% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈໍານວນ 76,754,560,222 ກີບ ຫລື ເທົ່າກັບ 99% ຂອງງົບປະມານທັງໝົດ ແລະ ສໍາລັບຮອບວຽນ 12 ງົບປະມານທັງໝົດ 82,634,391,216 ກີບ ເບີກຈ່າຍໄປແລ້ວ 75,563,082,311 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 79,093,371,331 | 31,879,971 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 329 | 76,754,560,222 | 693,264,345 |
| ຮອບວຽນ 12 (2014-2015) | 438 | 83,162,950,976 | 412 | 75,563,082,311 | 7,599,868,665 |
| ລວມ | **1,426** | 300,850,327,762 | **1,394** | 292,525,314,781 | 8,325,012,981 |

| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
|---|---|---|---|---|---|
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ | ຮອບວຽນ (ສົກປີ) |
| ຮອບວຽນ 13 (ສົກປີ 2015-2016) | 458[3] | 12.2[4] ລ້ານໂດລາສະຫະລັດ | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | ຮອບວຽນ 13 (ສົກປີ 2015-2016) |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 29 ກຸມພາ 2016*

## 3. <u>ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ</u>

- <u>ວຽກງານພັດທະນາຊຸມຊົນ</u>

- ວັນທີ 22-26 ກຸມພາ 2015 ສຳເລັດກອງປະຊຸມວຽກງານພັດທະນາຊຸມຊົນ.
- ສຳເລັດການກະກຽມເຄື່ອງມືກ່ຽວກັບວຽກງານ ສົ່ງເສີມສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ, ວຽກງານການປ້ອງກັນຜົນກະທົບທາງສັງຄົມ, ການຈັດຕັ້ງຄະນະກວດສອບຂັ້ນບ້ານ ແລະ ເຂົ້າຮ່ວມການຮຽນການສອນໃນກອງປະຊຸມກ່ຽວກັບວຽກງານພັດທະນາຊຸມຊົນ.
- ເຮັດວຽກຮ່ວມກັບ ຊ່ຽວຊານຈາກທະນາຄານໂລກ ທ່ານ ນາງ ໂນໂດກະ ທີ່ປຶກສາດ້ານການພັດທະນາສັງຄົມ ທີ່ຈະມາຊ່ວຍໃຫ້ຄຳປຶກສາຫາລື ແລະ ປັບປຸງແຜນດຳເນີນວາກງານວຽກງານ ສົ່ງເສີມສິດສະເໝີພາບຍິງຊາຍ ສຳລັບ ທລຍ ຮອບວຽນທີ 13 ແລະ ທລຍ ໄລຍະທີ 3.
- ສັງລວມຂໍ້ມູນຜູ້ປະສານງານກຸ່ມບ້ານ ໃນຮອບວຽນ 13 ຊຶ່ງສາມາດສັງລວມໄດ້ຄື: ມີສະມາຊິກຜູ້ປະສານງານກຸ່ມບ້ານທີ່ເປັນຊົນເຜົ່າ ຫລາຍກວ່າ 75% ຂອງສະມາຊິກທັງໝົດທີ່ມີ ແລະ ມີຜູ້ປະສານງານກຸ່ມບ້ານຍິງເພີ່ມຂຶ້ນ 52% ຊຶ່ງເຫັນວ່າ ຜູ້ປະສານງານກຸ່ມບ້ານຍິງເພີ່ມຂຶ້ນໃນທຸກໆຮອບວຽນ.
- ເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານເຊິ່ງມີ 2 ຫົວຂໍ້ຂ່າວ; ຄື: ການກໍ່ສ້າງໂຄງການ ກໍ່ສ້າງໂຮງຮຽນປະຖົມ ບ້ານ ພູວຽງ ກຸ່ມງານ , ຄວາມຄືບໜ້າຂອງໂຄງການຍ່ອຍ ຮອບວຽນທີ 13 ຂອງ ທລຍ ເມືອງ ໝອກ.
- ຕິດຕາມຊຸກຍູ້ ການກະຈາຍຂໍ້ມູນຂ່າວສານຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນຊຸມຊົນເປັນປົກກະຕິ.

---

[3] ແມ່ນຕົວເລກວາງແຜນຂັ້ນເມືອງ ອາດຈະມີການປ່ຽນແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

[4] ງົບປະມານອາດຈະມີການປ່ຽນແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

- ໄດ້ປະຊຸມທົບທວນຄືນການຈັດຕັ້ງປະຕິບັດວຽກງານ ເຄື່ອງມື ກະຈາຍຂໍ້ມູນຂ່າວສານສຶກສາ ແລະ ປະຊາສໍາພັນ (IEC) ໃນໄລຍະຜ່ານມາ ແລະວາງແຜນປັບປຸງການເຜີຍແຜ່ຂໍ້ມູນຂ່າວສານ ສໍາລັບຮອບວຽນທີ 13 ໃຫ້ 10 ແຂວງເປົ້າໝາຍຂອງໂຄງການ.
- ສໍາເລັດການເຜີຍແຜ່ຂໍ້ມູນ-ຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ລວມມີ 6 ຫົວຂໍ້ຂ່າວ.

▪ <u>ວຽກງານວິສະວະກໍາ ແລະ ວິຊາການ</u>

- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທລ ແລະ ກະຊວງແຜນການ.
- ສືບຕໍ່ສໍາຫລວດໂຄງການຍ່ອຍທີ່ເປັນທຶນຂອງຕ່າງປະເທດ (IDA) ຮອບວຽນທີ 13 (ສໍາຫຼວດ 100%, ອອກແບບ 99% ແລະ ຄິດໄລ່ 95%).
- ຕິດຕາມນັກສຶກສາປີສຸດທ້າຍທີ່ມາກວດກາໂຄງການຍ່ອຍຢູ່ແຂວງ ສາລະວັນ ແລະ ແຂວງ ເຊກອງ.
- ລົງກວດກາເອະສານດ້ານສະພາບແວດລ້ອມ ແລະ ໂຄງການຍ່ອຍ ທີ່ພົວພັນກັບປ່າສະຫງວນ ຢູ່ເມືອງວຽງທອງ, ແຂວງ ຫົວພັນ ຮ່ວມກັບຊ່ຽວຊານຈາກທະນາຄານໂລກ.
- ປັບປຸງແບບມາດຕະຖານການກໍ່ສ້າງ ແລະ ແບບຟອມເກັບກໍາຂໍ້ມູນດ້ານປະລິມານ ໃຫ້ເປັນເອກະພາບກັນໃນການນໍາໃຊ້ເຂົ້າໃນໂຄງການຍ່ອຍຮອບວຽນທີ 13.
- ກະກຽມ ແລະ ຂຶ້ນແຜນງົບປະມານ ໃນວຽກການກວດກາ ແລະ ຕິດຕາມໂຄງການຊຸມຊົນເປັນເຈົ້າການດ້ານສຸຂະອະນາໄມ ໃນ 4 ແຂວງພາກໃຕ້.
- ສໍາເລັດການລົງກະຕຸ້ນຊຸມຊົນພາຍໃຕ້ວຽກງານ ຊຸມຊົນເປັນເຈົ້າການດ້ານສຸຂະນາໄມ (ຊຈສ) ຢູ່ 4 ເມືອງຄື: ເຊໂປນ ແລະ ນອງ ແຂວງສະຫວັນນະເຂດ, ລະມາມ ແຂວງ ເຊກອງ ແລະ ຕະໂອ້ຍ ແຂວງ ສາລະວັນ ປະຈຸບັນແມ່ນຢູ່ໃນຂັ້ນຕອນການຕິດຕາມການກໍ່ສ້າງວິດຖ່າຍ.
- ສັງລວມບົດລາຍງານຄວາມຄືບໜ້າ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ ຊຈສ ຂອງ 4 ແຂວງພາກໃຕ້ (ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື).

▪ <u>ວຽກງານຕິດຕາມ-ປະເມີນຜົນ</u>

- ໄດ້ຕິດຕາມ ແລະ ກວດກາການສັງລວມເອກະສານກ່ຽວກັບຂໍ້ມູນໂຄງການຮອບວຽນ 13 ເພື່ອຂໍໜັງສືອະນຸມັດການຈັດຕັ້ງປະຕິບັດຈາກຜູ້ໃຫ້ທຶນ ພ້ອມທັງໄດ້ສະຫຼຸບຕີລາຄາຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 13 ພາຍໃຕ້ທຶນສົມທົບລັດຖະບານ.
- ສໍາເລັດການລົງເຮັດວຽກພາກສະໜາມຢູ່ແຂວງ ສະຫວັນນະເຂດເພື່ອຊີ້ນໍາພະນັກງານຂັ້ນແຂວງ ແລະ ເມືອງກ່ຽວກັບການນໍາໃຊ້ລະບົບຖານ ຂໍ້ມູນ ແລະ ວຽກງານກົນໄກສະແດງຄໍາຄິດເຫັນ ແລະ ແກ້ໄຂປັນຫາ.

- ສຳເລັດການກະກຽມໜັງສືສະເໜີ ເພື່ອຂໍອະນຸມັດການອອກແບບ ແລະ ສ້າງລະບົບຖານຂໍ້ມູນໃໝ່ ຂອງໂຄງການ ທລຍ ໄລຍະທີ 3 ອີງຕາມຮູບແບບຂອງ ທລຍ 2 ເພື່ອເຮັດໃຫ້ຮັດກຸມ, ທັນສະໄໝ ແລະ ມີປະສິດທິພາບຍິ່ງຂຶ້ນ.
- ສຳເລັດການກະກຽມໜັງສືສະເໜີ ຂໍອະນຸມັດການຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຕິດຕາມ ແລະ ປະເມີນຜົນ ຂັ້ນສູນກາງ ກ່ຽວກັບລະບົບໂດຍຊ່ຽວຊານຈາກຕ່າງປະເທດ.
- ໄດ້ສຳເລັດການກະກຽມແຜນການນຳໃຊ້ງົບປະມານປະຈຳປີຂອງພະແນກໃນໂຄງການ ທລຍ ໄລຍະທີ 3.
- ໄດ້ເຂົ້າຮ່ວມການນຳສະເໜີຜົນໄດ້ຮັບຂອງການປະເມີນຜົນກະທົບໄລຍະທ້າຍໂຄງການ (Endline Survey) ທີ່ຫ້ອງການທະນາຄານໂລກ.

- <u>ວຽກງານບໍລິຫານ - ການເງິນ</u>

- ສຳເລັດບົດລາຍການເງິນປະຈຳເດືອນ ມັງກອນ 2016.
- ສຳເລັດການອະນຸມັດການຄ່ຽນເງິນປະຈຳເດືອນ ພະຈິກ 2015, ຈາກທະນາຄານໂລກ.
- ສຳເລັດການຈັດຝຶກອົບຮົມທົບທວນຄືນວຽກງານບໍລິຫານ-ການເງິນໃຫ້ກັບພະນັກງານແຂວງ ແລະ ເມືອງ ທີ່ສູນກາງ 16-19 ກຸມພາ 2016.
- ສຳເລັດ ແລະ ສົ່ງບົດລາຍງານປະຈຳໄຕມາດ 1, ສຳລັບສົກປີ 2015-2016, ໃຫ້ຜູ້ໃຫ້ທຶນ, ກ່ອນວັນທີ 15 ກຸມພາ 2016.
- ສຳເລັດການລົງເຮັດວຽກຮ່ວມກັບກະຊວງການເງິນ, ກົມຊັບສິນ, ເພື່ອປະຕິບັດການຕີລາຄາມູນຄ່າຊັບສິນບັດທີ່ຮັບໃຊ້ວຽກງານຂອງໂຄງການ ທລຍ.

- <u>ວຽກງານຈັດຕັ້ງ</u>

- ສຳເລັດການລົງຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຮ່ວມຊີວິດການເມືອງກັບພະນັກງານ ທລຍ ແຂວງເຊກອງ ແລະ ສາລະວັນ ໃນໄລຍະວັນທີ 09-14 ກຸມພາ 2016.
- ຈັດສົ່ງສັນຍາ ປະຈຳປີ 2016 ໃຫ້ແກ່ ແຂວງ ຫລວງພະບາງ, ຜົ້ງສາລີ, ຫລວງນ້ຳທາ,ຊຽງຂວາງ, ຫົວພັນ, ສະຫວັນນະເຂດ, ແລະ ສາລາວັນ.
- ສຳເລັດການບັນຈຸພະນັກງານ ຕຳແໜ່ງ:
    - ຂັບລົດ ສູນກາງ
    - ວິສະວະກອນເມືອງລອງ, ຫຼວງນ້ຳທາ
    - ພັດທະນາຊຸມຊົນເມືອງ ກະລຶມ
    - ປະສານງານກຸ່ມບ້ານ ດ້ານໂພຊະນາການ ເມືອງນອງ, ສະຫວັນນະເຂດ
    - ຄຸ້ມຄອງລະບົບຖານຂໍ້ມູນ ປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ, ຂັ້ນສູນກາງ

- ສຳເລັດການບັນຈຸ ພະນັກງານຕຳແໜ່ງວິສະວະກອນໄລຍະສັ້ນ ສຳລັບແຂວງ ຫົວພັນ 03 ທ່ານ, ອຸດົມໄຊ 03 ທ່ານ ແລະ ຜົ້ງສາລີ 01 ທ່ານ

- ສຳເລັດການເຜີຍແຜ່ຂໍ້ມູນກ່ຽວກັບວຽກງານຈັດຕັ້ງໃຫ້ແກ່ ພະນັກງານການເງິນ ແຂວງ ແລະ ເມືອງ ໃນການຝຶກອົບຮົມ ວຽກງານບໍລິຫານການເງິນ ທີ່ໄດ້ຈັດໃນລະຫວ່າງວັນທີ 16-19 ເດືອນ ກຸມພາ 2016.
- ສຳເລັດການເຜີຍແຜ່ຂໍ້ມູນກ່ຽວກັບວຽກງານຈັດຕັ້ງໃຫ້ແກ່ ພະນັກງານພັດທະນາຊຸມຊົນ ແຂວງ ແລະ ເມືອງ ໃນການຝຶກອົບຮົມ ວຽກງານພັດທະນາຊຸມຊົນ ທີ່ໄດ້ຈັດໃນລະຫວ່າງວັນທີ 22-26 ເດືອນ ກຸມພາ 2016.

- <u>ວຽກງານຈັດຊື້-ຈັດຈ້າງ</u>

- ສຳເລັດການເຂົ້າຮ່ວມການຈັດຝຶກອົບຮົມວຽກງານວິຊາການບໍລິຫານການເງິນ.
- ດຳເນີນຂັ້ນຕອນການກະກຽມບົດລາຍງານປະເມີນຜົນ, ຕັດສິນ ແລະ ເຊັນສັນຍາກ່ຽວກັບການປະມູນແບບເປີດກ້ວາງພາຍໃນ ສຳລັບລົດກະບະ ຈຳນວນ 5 ຄັນ.
- ສຳເລັດການຈັດສົ່ງ ແລະ ຂໍເບີກຈ່າຍເງິນກ່ຽວກັບການປະມູນຈັດຊື້ເຄື່ອງມື ກະຈາຍຂໍ້ມູນຂ່າວສານສຶກສາ ແລະ ປະຊາສຳພັນ (IEC) ຂອງພະນັກງານອຳນວຍຄວາມສະດວກຂອງໂຄງການປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (LN).
- ສຳເລັດການເປີດຊອງປະມູນ ແລະ ເຮັດສັນຍາສຳລັບໂຄງການຍ່ອຍ ບ້ວງທຶນສົມທົບຂອງລັດຖະບານ ງວດທີ 1.
- ສຳເລັດການກະກຽມຮ່າງແຜນງົບປະມານ ແລະ ແຜນຈັດຊື້-ຈັດຈ້າງ ຂອງ ທລຍ ສູນກາງ ສຳລັບໂຄງການ ທລຍ ໄລຍະທີ 3.
- ສຳເລັດການຈັດສົ່ງ ແລະ ຂໍເບີກຈ່າຍເງິນກ່ຽວກັບການຜະລິດເຄື່ອງມື ກະຈາຍຂໍ້ມູນຂ່າວສານສຶກສາ ແລະ ປະຊາສຳພັນ (IEC) ກ່ຽວກັບໂຄງການໂຄງການປັບປຸງຊີວິດການເປັນຢູ່ ເຊື່ອມສານ ໂພຊະນາການ (LN).
- ກວດກາງົບປະມານຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້-ຈັດຈ້າງ ບ້ວງເງິນຂອງທະນາຄານໂລກ ສົກປີ 2015-2016 ສຳລັບ 10 ແຂວງ.
- ສຳເລັດການເຊັນສັນຍາໂຄງການຍ່ອຍບ້ວງທຶນສົມທົບຂອງລັດຖະບານແຂວງຜົ້ງສາລີ ແລະ ແຂວງ ເຊກອງ.

4. <u>ແຜນວຽກສຳລັບເດືອນ ມີນາ 2016</u>

- <u>ວຽກງານພັດທະນາຊຸມຊົນ</u>

- ວັນທີ 9-10 ມີນາ 2016 ຈັດກອງປະຊຸມປຶກສາຫາລື ວຽກງານຜົນກະທົບ ທາງສັງຄົມ ແລະ ສິ່ງແວດລ້ອມໃຫ້ພະນັກງານແຂວງ ແລະ ເມືອງ ທລຍ III ທີ່ແຂວງ ຈຳປາສັກ.
- ຈັດຊຸດຝຶກອົບຮົມການວາງແຜນພັດທະນາຂັ້ນບ້ານ, ຂັ້ນກຸ່ມບ້ານ ແລະ ຂັ້ນເມືອງ ຮູບແບບ ຕິດຕາມການວາງແຜນພັດທະນາຂັ້ນກຸ່ມບ້ານ ແລະ ຂັ້ນເມືອງ ຮູບແບບ CDD ໃຫ້ກັບພະນັກງານພັດທະນາຊຸມຊົນຂັ້ນແຂວງ ແລະ ເມືອງ ເພື່ອການວາງແຜນພັດທະນາ ຮອບວຽນ 14.
- ປະສານງານກັບທີມງານ ຕິດຕາມ-ປະເມີນຜົນ ເພື່ອກະກຽມເຄື່ອງມືຝຶກອົບຮົມກ່ຽວກັບ ກົນໄກການສະແດງຄຳຄິດຄຳເຫັນຄະນະກວດສອບຂັ້ນບ້ານ ເພື່ອເຂົ້າຮ່ວມການຮຽນການສອນໃນຊຸດຝຶກອົບຮົມກ່ຽວກັບ ການວາງແຜນພັດທະນາບ້ານ, ກຸ່ມບ້ານ ທີ່ຈະຈັດຕັ້ງປະຕິບັດໃນຮອບວຽນ 14.
- ຕິດຕາມກວດກາແຜນງົບປະມານຂໍຈັດຝຶກອົບຮົມກົນໄກການສະແດງຄຳຄິດຄຳເຫັນຄະນະກວດສອບຂັ້ນບ້ານຈາກ 8 ເມືອງເປົ້າໝາຍ ການພັດທະນາທີ່ຈັດຕັ້ງໂດຍຊຸມຊົນຢ່າງເຕັມຮູບແບບ (CDD) ຮອບວຽນ 13
- ຕິດຕາມຊຸກຍູ້ການຜະລິດຄູ່ມື ນະໂຍບາຍດ້ານຊົນເຜົ່າ ພາລາວ-ອັງກິດ, ນະໂຍບາຍການຍົກຍ້າຍຖິ່ນຖານ ແລະ ທົດແທນຄືນ ພາສາລາວ-ອັງກິດ, ນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ພາສາລາວ-ອັງກິດ, ປຶ້ມລາຍງານການປະເມີນຄວາມຍືນຍົງຂອງໂຄງການຍ່ອຍ ທລຍ (ພາສາລາວ-ອັງກິດ), ບົດລາຍງານປະຈຳປີ 2015 ຂອງ ທລຍ 2, ປຶ້ມຜົນງານ 13 ປີຂອງ ທລຍ, ຮູບພາບແຜ່ນໃຫຍ່(Roller), ແຜ່ນສາກວາງສະແດງ (Booth screen) ໃຫ້ສຳເລັດ ແລະ ແຈກຢາຍໃຫ້ກຸ່ມເປົ້າໝາຍຕາມແຜນທີ່ວາງໄວ້.
- ຂຽນຂ່າວ ແລະ ດັດແກ້ຂ່າວທີ່ ໄດ້ຮັບຈາກຕ່າງແຂວງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງ ການຍ່ອຍຂອງ ທລຍ ຮອບວຽນທີ 12 ແລະ ການກະກຽມຮອບວຽນທີ 13 ຢ່າງໜ້ອຍໃຫ້ໄດ້ 5 ບົດຂ່າວ.
- ກະກຽມຜະລິດເຄື່ອງມືກະຈາຍຂໍ້ມູນ-ຂ່າວສານກິດຈະກຳປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ເພື່ອຮັບໃຊ້ຢູ່ໃນ 165 ບ້ານ.

- <u>ວຽກງານວິສະວະກຳ</u>

- ລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ ໃນວັນທີ 10-17 ມີນາ 2016 ແລະ 23 ມີນາ ຫາ 5 ເມສາ 2016.
- ຈັດກອງປະຊຸມດ້ານວິຊາການ ກ່ຽວກັບ ວຽກງານປົກປ້ອງທາດ້ານສິ່ງແວດລ້ອມ ແລະ ສັງຄົມ ຢູ່ ແຂວງຫລວງພະບາງ (6 ແຂວງພາກເໜືອເຂົ້າຮ່ວມ: ຜົ້ງສາລີ, ອຸດົມໄຊ, ຫລວງນໍ້າທາ, ຫລວງພະບາງ, ຫົວພັນ ແລະ ຊຽງຂວາງ) ແລະ ຈັດຢູ່ແຂວງຈຳປາສັກ (4 ແຂວງພາກໃຕ້ເຂົ້າຮ່ວມ: ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື) ໃນວັນທີ 9-10 ມີນາ 2016.
- ລົງສຳຫລວດ ຊ່ວຍ 2 ແຂວງ: ຫລວງພະບາງ ແລະ ອຸດົມໄຊ ສຳລັບກຸ່ມທີ່ຍັງມີງົບປະມານເຫຼືອຢູ່.

- ສືບຕໍ່ສຳຫລວດ, ອອກແບບ ແລະ ຄິດໄລ່ ໂຄງການຍ່ອຍ ຮອບວຽນທີ 13 ສຳລັບໂຄງການຍ່ອຍທີ່ຍັງບໍ່ທັນສຳເລັດ ເພື່ອຂໍອະນຸມັດຈາກຜູ້ໃຫ້ທຶນ (NOL).
- ສືບຕໍ່ສຳຫລວດ, ອອກແບບ ແລະ ຄິດໄລ່ ໂຄງການຍ່ອຍ ຮອບວຽນທີ 13 ສຳລັບໂຄງການຍ່ອຍທີ່ຍັງບໍ່ທັນສຳເລັດເພື່ອຂໍ NOL.
- ສືບຕໍ່ສັງລວມບົດລາຍງານ ຄວາມຄືບໜ້າວຽກງານ ຊຸມຊົນເປັນເຈົ້າການດ້ານສຸຂະນາໄມ (ຊຈສ).
- ສືບຕໍ່ປັບປຸງແບບມາດຕະຖານ ແລະ ແບບ ມາດຕະຖານ ຂໍ້ມູນດ້ານປະລິມານໃຫ້ສຳເລັດ.
- ລົງກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ ຮູບແບບ CDD ຢູ່ 3 ແຂວງ: ອຸດົມໄຊ, ຫລວງພະບາງ ແລະ ສະຫວັນນະເຂດ.

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ສືບຕໍ່ຕິດຕາມການອະນຸມັດການຈັດຕັ້ງປະຕິບັດໂຄງການຮອບວຽນ 13 ຈາກຜູ້ໃຫ້ທຶນ ເພື່ອດຳເນີນການຈັດຊື້-ຈັດຈ້າງ ແລະ ຈັດຕັ້ງປະຕິບັດໃຫ້ທັນເວລາ.
- ກະກຽມບົດສະຫຼຸບຫຍໍ້ກ່ຽວກັບຂໍ້ມູນໂຄງການຮອບວຽນ 13 ເປັນຕົ້ນແມ່ນຂໍ້ມູນກ່ຽວກັບຈຳນວນໂຄງການ, ງົບປະມານຄາດຄະເນ ແລະ ຈຳນວນຜູ້ໄດ້ຮັບຜົນປະໂຫຍດ.
- ສືບຕໍ່ສະໜອງຂໍ້ມູນໃຫ້ຜູ້ໃຫ້ທຶນກ່ຽວກັບໂຄງການຮອບວຽນທີ 13 ແລະ ຂໍ້ມູນອື່ນໆທີ່ຈຳເປັນໃນການກະກຽມໂຄງການ ທລຍ ໄລຍະທີ III.
- ສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການລົງເຮັດວຽກພາກສະໜາມໃນການກວດກາໂຄງການຍ່ອຍພາຍໃຕ້ທຶນສົມທົບລັດຖະບານ ຮອບວຽນ 12 ແລະ ຮອບວຽນ 13.
- ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການປ້ອງກັນທາງດ້ານສັງຄົມທີ່ຈັດໂດຍພະແນກພັດທະນາຊຸມຊົນ ແລະ ວິຊາການ.
- ສືບຕໍ່ຕິດຕາມຜົນໄດ້ຮັບຂອງການປະເມີນຜົນກະທົບໄລຍະທ້າຍໂຄງການ (Endline Survey) ຂອງ ທລຍ ໄລຍະທີ II.
- ຕິດຕາມການອະນຸມັດຈາກຜູ້ໃຫ້ທຶນກ່ຽວກັບການຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຕິດຕາມ-ປະເມີນຜົນ ຂັ້ນສູນກາງ ແລະ ການອະນຸມັດກ່ຽວກັບການອອກແບບ ແລະ ສ້າງລະບົບຖານຂໍ້ມູນໃໝ່ຂອງໂຄງການ ທລຍ ໄລຍະທີ III.

- <u>ວຽກງານບໍລິຫານ-ການເງິນ</u>

- ກະກຽມບົດລາຍການເງິນປະຈຳເດືອນ ກຸມພາ 2016.
- ສືບຕໍ່ຄ່ຽນເງິນປະຈຳເດືອນທັນວາ 2015 ບ້ວງເງິນ IDA 56770 ຈາກທະຄານໂລກ.

- ກະກຽມຂໍ້ຕົກລົງສົ່ງໃຫ້ ທລຍ ການເງິນແຂວງກ່ຽວກັບການຝຶກອົບຮົມວຽກງານບໍລິຫານ-ການເງິນໃນເດືອນ ກຸມພາ 2016.
- ກະກຽມຄ່ຽນເງິນໂຄງການຍ່ອຍຮອບວຽນ 12, ສໍາລັບແຂວງສະຫວັນນະເຂດ ປະມານ 503,200 ໂດລາ, ຈາກ ຄັງເງິນແຫ່ງຊາດ.
- ກະກຽມຄ່ຽນເງິນບໍລິການນໍາຄັງເງິນແຫ່ງຊາດສໍາລັບ ເດືອນ ມັງກອນ ແລະ ກຸມພາ 2016, ເປັນມູນຄ່າ 735,000 ໂດລາ.
- ຄ່ຽນເງິນລ່ວງຫນ້ານໍາທະນາຄານໂລກສໍາລັບ ທຶນກູ້ຢືມເລກທີ IDA 56770, ຈໍານວນ 2,500,000 ໂດລາ.
- ລົງເຮັດວຽກຮ່ວມກັບຂະແຫນງການກ່ຽວຂ້ອງ, ເພື່ອກວດກາໂຄງການຍ່ອຍທີ່ຈັດຕັ້ງປະຕິບັດພາຍໃຕ້ທຶນສົມທົບ ລັດທະບານສໍາລັບຮອບວຽນ 12, ໃນ 6 ແຂວງ (ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື).
- ສືບຕໍ່ກະກຽມແຜນງົບປະມານ ສໍາລັບໂຄງການ ທລຍ ໄລຍະ III, ເພື່ອນໍາສະເຫນີໃຫ້ຜູ້ໃຫ້ທຶນ.
- ສືບຕໍ່ສັງລວມແຜນງົບປະມານຈາກທຸກພະແນກເຂົ້າໃນແຜນງົບປະມານປະຈໍາປີ 2015 – 2016 ຫລື ຮອບວຽນ ທີ 13.

- <u>ວຽກງານຈັດຕັ້ງ</u>
- ສືບຕໍ່ປະກາດຮັບສະໝັກ ຕໍາແໜ່ງວິສະວະກອນໄລຍະສັ້ນ ຢູ່ ແຂວງ ສະຫວັນນະເຂດ 04 ຕໍາແໜ່ງ ແລະ ຫລວງ ພະບາງ 02 ຕໍາແໜ່ງ.
- ລໍຖ້າການຕັດສິນສຸດທ້າຍຂອງຄະນະຮັບຜິດຊອບໂຄງການ ກ່ຽວກັບການຕໍ່ສັນຍາຂອງພະນັກງານ ແຂວງ ອຸດົມໄຊ , ເຊກອງ ແລະ ອັດຕະປື ເພື່ອດັດແກ້ ແລະ ກຽມຈັດສົ່ງ.
- ກະກຽມການຊໍາລະຄ່າທໍານຽມປະກັນໄພ ໃຫ້ສໍາເລັດກ່ອນ ວັນທີ 15 ມີນາ 2016.
- ປັບປຸງໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດໜ້າທີ່ຮັບຜິດຊອບຂອງພະນັກງານ ສໍາລັບ ທລຍ ໄລຍະ 3.

- <u>ວຽກງານຈັດຊື້-ຈັດຈ້າງ</u>
- ກະກຽມແຜນຈັດຊື້ໂຄງການຍ່ອຍບ້ວງທຶນຂອງທະນາຄານໂລກ ສົກປີ 2015-2016
- ຕິດຕາມການດໍາເນີນຂັ້ນຕອນການຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້ຈັດຈ້າງ ໃຫ້ກັບ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ
- ຕິດຕາມການປະກາດ ແລະ ເປີດຊອງປະມູນໂຄງການຍ່ອຍບ້ວງທຶນຂອງທະນາຄານໂລກ ຮອບວຽນ 13
- ກະກຽມເອກະສານຈົດທະບຽນສັນຍາ, ແລະ ເອກະສານຂໍຍົກເວັ້ນພາສີອາກອນສໍາລັບການຈັດຊື້ລົດກະບະ 4x4 ຈໍານວນ 5 ຄັນ

- ກວດກາງົບປະມານ ແລະ ຂໍອະນຸມັດເບີກຈ່າຍເງິນສໍາລັບການເປີດຊອງປະມູນໂຄງການຍ່ອຍບ້ວງທຶນສົມທົບຂອງລັດຖະບານ ແລະ ທຶນຂອງທະນາຄານໂລກ ຮອບວຽນ 13 ສົກປີ 2015-2016
- ດໍາເນີນຂັ້ນຕອນການຂໍອະນຸມັດການຈັດຊື້ອຸປະກອນຮັບໃຊ້ພະແນກວິສະວະກໍາເພື່ອແຢກຢາຍໃຫ້ພະນັກງານວິຊາການຂັ້ນແຂວງ ແລະ ເມືອງ
- ກະກຽມລາຍການໜ້າວຽກ ແລະ ດໍາເນີນຂັ້ນຕອນການຕໍ່ສັນຍາ ສໍາລັບບໍລິສັດກວດສອບພາບນອກຂອງໂຄງການ ທລຍ ແລະ ໂຄງການໂຄງການປັບປຸງຊີວິດການເປັນຢູ່ ເຊື່ອມສານ ໂພຊະນາການ (LN).

| ຜູ້ອໍານວຍການບໍລິຫານ ທລຍ | ຫົວໜ້າພະແນກ ຕິດຕາມ-ປະເມີນຜົນ | ສັງລວມ ແລະ ລາຍງານ |
| --- | --- | --- |
| ດ.ພ.ທ.ລ / ຜູ້ອໍານວຍການ ບໍລິຫານ / ກອງທຶນຫລຸດຜ່ອນຄວາມທຸກຍາກ | | |
| ບຸນກວ້າງ ສຸວັນນະພັນ<br>Bounkhouang SOUVANNAPHANH | ---------------------<br>ດຣ.ທັດທະຈັນ ພິມພັນທະວົງ | ---------------------<br>ສິດທິເດດ ກິ່ງວົງສາ |